ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

404

ກະຊວງຍຸຕິທຳ

ເລກທີ........./ກຍ
ນະຄອນຫຼວງວຽງຈັນ, ວັນທີ 28 APR 2016

# ຂໍ້ຕົກລົງ
# ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ
# ຂອງຄະນະແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 404/ນຍ, ລົງວັນທີ 23 ພະຈິກ 2007 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງຍຸຕິທຳ;
- ອີງຕາມ ຂໍ້ຕົກລົງຂອງນາຍົກລັດຖະມົນຕີ ສະບັບເລກທີ 01/ນຍ, ລົງວັນທີ 06 ມັງກອນ 2016 ວ່າດ້ວຍການສ້າງຕັ້ງຄະນະແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ;
- ອີງຕາມ ການຄົ້ນຄວ້າຂອງກົມຄຸ້ມຄອງລະບົບຍຸຕິທຳ.

## ລັດຖະມົນຕີ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ, ແນໃສ່ເສີມຂະຫຍາຍຄວາມສາມັກຄີປອງດອງ ລະຫວ່າງປະຊາຊົນບັນດາເຜົ່າຢູ່ພາຍໃນບ້ານ, ຫຼຸດຜ່ອນຄະດີຂຶ້ນໄປຫາສານ, ປະກອບສ່ວນເຂົ້າໃນການປົກປັກຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມຍຸຕິທຳໃນສັງຄົມ.

### ມາດຕາ 2 ການແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ

ການແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ ແມ່ນການແກ້ໄຂຂໍ້ຂັດແຍ່ງທີ່ເກີດຂຶ້ນພາຍໃນບ້ານ ດ້ວຍການປະນີປະນອມ ໂດຍຄະນະແກ້ໄຂຂໍ້ຂັດແຍ່ງ ແນໃສ່ເຮັດໃຫ້ຄູ່ກໍລະນີ ມີຄວາມຮູ້ສຶກຕື່ນຕົວ ແລະ ຕົກລົງແກ້ໄຂຂໍ້ຂັດແຍ່ງທີ່ເກີດຂຶ້ນດ້ວຍຄວາມສະໝັກໃຈ.

### ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນ ຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ຂໍ້ຂັດແຍ່ງຂັ້ນບ້ານ** ໝາຍເຖິງຄວາມບໍ່ຖືກຕ້ອງປອງດອງກັນ, ຄວາມບໍ່ເຂົ້າໃຈກັນ, ບໍ່ສາມາດຕົກລົງ ຫຼື ບໍ່ລົງລອຍກັນ ທີ່ເກີດຂຶ້ນລະຫວ່າງບຸກຄົນກັບບຸກຄົນທີ່ຢູ່ພາຍໃນບ້ານດຽວກັນ ຫຼື ຢູ່ບ້ານອື່ນ, ລະຫວ່າງບຸກຄົນກັບການຈັດຕັ້ງກ່ຽວກັບສາຍພົວພັນທາງແພ່ງ, ການຄ້າ, ຄອບຄົວ, ສິ່ງແວດລ້ອມ ແລະ ອື່ນໆ;

2. **ການປະນີປະນອມ** ໝາຍເຖິງ ການຜ່ອນສັ້ນຜ່ອນຍາວ, ການໃຫ້ອະໄພ ຊຶ່ງກັນ ແລະ ກັນ;
3. **ຄູ່ກໍລະນີ** ໝາຍເຖິງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຂໍ້ຂັດແຍ່ງ ຊຶ່ງປະກອບດ້ວຍ ຜູ້ຮ້ອງຂໍ ແລະ ຜູ້ຖືກຮ້ອງຂໍ.

**ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ**

ລັດ ຊຸກຍູ້ ແລະ ສົ່ງເສີມໃຫ້ມີການແກ້ໄຂຂໍ້ຂັດແຍ່ງຢູ່ຂັ້ນບ້ານ ດ້ວຍການໄກ່ເກ່ຍ ເພື່ອປົກປັກຮັກສາຄວາມສາມັກຄີປອງດອງເປັນປຶກແຜ່ນ, ຄວາມຮັກແພງ ຂອງປະຊາຊົນບັນດາເຜົ່າ ພາຍໃນບ້ານ, ປົກປັກຮັກສາຮີດຄອງປະເພນີ ແລະ ເສີມຂະຫຍາຍມູນເຊື້ອອັນດີງາມຂອງຊາດ.

ລັດ ສ້າງເງື່ອນໄຂ ແລະ ອໍານວຍຄວາມສະດວກໃຫ້ຄະນະແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ ສາມາດເຄື່ອນໄຫວປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຕາມທີ່ໄດ້ກໍານົດໄວ້ໃນຂໍ້ຕົກລົງ ສະບັບນີ້.

## ໝວດທີ 2
## ຫຼັກການພື້ນຖານຂອງການແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ

**ມາດຕາ 5 ຫຼັກການພື້ນຖານ**

ການແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ ໃຫ້ປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:
1. ຄວາມສະເໝີພາບຂອງຄູ່ກໍລະນີ;
2. ການປະນີປະນອມຄູ່ກໍລະນີ;
3. ການດໍາເນີນຊ້ອງໜ້າ ແລະ ການຮັກສາຄວາມລັບ;
4. ຄວາມເປັນເອກະລາດ ແລະ ເປັນກາງຂອງຄະນະແກ້ໄຂຂໍ້ຂັດແຍ່ງ;
5. ການເຄົາລົບສິດ ແລະ ຜົນປະໂຫຍດອັນຊອບທໍາຂອງຄູ່ກໍລະນີ.

**ມາດຕາ 6 ຄວາມສະເໝີພາບຂອງຄູ່ກໍລະນີ**

ໃນການແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານຄູ່ກໍລະນີມີຄວາມສະເໝີພາບ ໂດຍບໍ່ຂຶ້ນກັບຕົ້ນກໍາເນີດ, ຖານະທາງດ້ານເສດຖະກິດ-ສັງຄົມ, ເຊື້ອຊາດ, ຊົນເຜົ່າ, ສາສະໜາ ແລະ ເພດ.

**ມາດຕາ 7 ການດໍາເນີນຊ້ອງໜ້າ ແລະ ການຮັກສາຄວາມລັບ**

ການແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ ແຕ່ລະຄັ້ງ ຕ້ອງໃຫ້ມີການເຂົ້າຮ່ວມ ຂອງຄູ່ກໍລະນີ.

ຄະນະແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ ແລະ ຜູ້ເຂົ້າຮ່ວມອື່ນ ຕ້ອງຮັກສາຄວາມລັບສ່ວນຕົວຂອງຄູ່ກໍລະນີ.

**ມາດຕາ 8 ຄວາມເປັນເອກະລາດ ແລະ ເປັນກາງຂອງຄະນະແກ້ໄຂຂໍ້ຂັດແຍ່ງ**

ຄະນະແກ້ໄຂຂໍ້ຂັດແຍ່ງ ມີຄວາມເປັນເອກະລາດໃນການປະຕິບັດໜ້າທີ່ຂອງຕົນ ໂດຍບໍ່ມີການແຊກແຊງຈາກພາຍນອກ.

ຄະນະແກ້ໄຂຂໍ້ຂັດແຍ່ງ ຕ້ອງວາງຕົວເປັນກາງໃນການປະຕິບັດໜ້າທີ່ຂອງຕົນ, ບໍ່ລໍາອຽງ ແລະ ບໍ່ເຂົ້າຂ້າງຄູ່ກໍລະນີ ຝ່າຍໃດຝ່າຍໜຶ່ງ.

**ມາດຕາ 9 ການເຄົາລົບສິດ ແລະ ຜົນປະໂຫຍດອັນຊອບທໍາຂອງຄູ່ກໍລະນີ**

ຄະນະແກ້ໄຂຂໍ້ຂັດແຍ່ງ ຕ້ອງເຄົາລົບສິດ ແລະ ຜົນປະໂຫຍດອັນຊອບທໍາ ຂອງຄູ່ກໍລະນີ ໂດຍສ້າງເງື່ອນໄຂ ແລະ ອໍານວຍຄວາມສະດວກໃຫ້ຄູ່ກໍລະນີ ໄດ້ສະເໜີຂໍ້ມູນ, ຫຼັກຖານ ແລະ ມີຄໍາເຫັນກ່ຽວກັບບັນຫາຕ່າງໆ ຂອງຂໍ້ຂັດແຍ່ງ.

## ໝວດທີ 3
## ຄະນະແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ

**ມາດຕາ 10 ທີ່ຕັ້ງ ແລະ ພາລະບົດບາດ**

ຄະນະແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ ແມ່ນການຈັດຕັ້ງຍຸຕິທຳຮາກຖານ ທີ່ຂຶ້ນກັບໜ່ວຍງານບໍລິຫານ ແລະ ການປົກຄອງຂອງບ້ານ, ເຄື່ອນໄຫວວຽກງານພາຍໃຕ້ການຊີ້ນຳທາງດ້ານວິຊາການຂອງຫ້ອງການຍຸຕິທຳເມືອງ, ເທດສະບານ, ມີພາລະບົດບາດ ແກ້ໄຂຂໍ້ຂັດແຍ່ງທີ່ເກີດຂຶ້ນພາຍໃນບ້ານ.

**ມາດຕາ 11 ສິດ ແລະ ໜ້າທີ່**

ຄະນະແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາເຜີຍແຜ່, ສຶກສາອົບຮົມ ກົດໝາຍ ແລະ ລະບຽບການ ໃຫ້ປະຊາຊົນບັນດາເຜົ່າພາຍໃນບ້ານ;
2. ໄກ່ເກ່ຍຂໍ້ຂັດແຍ່ງກ່ຽວກັບສາຍພົວພັນທາງແພ່ງ, ການຄ້າ, ຄອບຄົວ, ສິ່ງແວດລ້ອມ ແລະ ຂໍ້ຂັດແຍ່ງອື່ນ ຕາມການສະເໜີຂອງຄູ່ກໍລະນີ ບົນພື້ນຖານ ກົດໝາຍ ແລະ ລະບຽບການ;
3. ໄກ່ເກ່ຍການກະທຳຜິດທາງອາຍາທີ່ມີລັກສະນະເບົາບາງ ( ຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 24 ຂອງຂໍ້ຕົກລົງສະບັບນີ້ );
4. ໄກ່ເກ່ຍການກະທຳຜິດຂອງເດັກ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ, ກົດໝາຍວ່າດ້ວຍການດຳເນີນຄະດີເດັກ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ;
5. ຕິດຕາມ ແລະ ຊຸກຍູ້ ການປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ ທີ່ຄູ່ກໍລະນີໄດ້ຕົກລົງກັນ;
6. ເກັບຄ່າບໍລິການໃນການແກ້ໄຂຂໍ້ຂັດແຍ່ງ ຕາມທີ່ໄດ້ກຳນົດໄວ້ໃນລັດຖະບັນຍັດຂອງປະທານປະເທດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ທີ່ໄດ້ວາງອອກແຕ່ລະໄລຍະ;
7. ໄດ້ຮັບການຍົກລະດັບ, ຝຶກອົບຮົມທາງດ້ານວິຊາການ ແລະ ໄດ້ຮັບການປົກປ້ອງຕາມກົດໝາຍ ແລະ ລະບຽບການ;
8. ໄດ້ຮັບນະໂຍບາຍ, ການຍ້ອງຍໍ ແລະ ອື່ນໆ ຕາມການສະເໜີຂອງນາຍບ້ານ;
9. ປະສານສົມທົບກັບອົງການຈັດຕັ້ງຕ່າງໆຂອງບ້ານ ໃນການປະຕິບັດໜ້າທີ່ວຽກງານຂອງຕົນ;
10. ເກັບກຳສະຖິຕິ, ສະຫຼຸບ, ຖອດຖອນບົດຮຽນ ແລະ ລາຍງານ ກ່ຽວກັບວຽກງານໃຫ້ຂັ້ນເທິງຂອງຕົນ ຢ່າງເປັນປົກກະຕິ;
11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 12 ການແຕ່ງຕັ້ງຄະນະແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ**

ຄະນະແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ ແມ່ນຜູ້ຊົງຄຸນວຸດທິ ຊຶ່ງໄດ້ຮັບການຄັດເລືອກຈາກປະຊາຊົນພາຍໃນບ້ານ ແລະ ຖືກແຕ່ງຕັ້ງໂດຍເຈົ້າເມືອງ, ຫົວໜ້າເທດສະບານ ຕາມການສະເໜີຂອງອົງການປົກຄອງບ້ານໂດຍຜ່ານຫ້ອງການຍຸຕິທຳເມືອງ, ເທດສະບານ.

ໃນກໍລະນີ ບຸກຄົນໃດໜຶ່ງຫາກສິ້ນສຸດການເປັນຄະນະແກ້ໄຂຂໍ້ຂັດແຍ່ງ ໃຫ້ດຳເນີນການຄັດເລືອກເອົາຜູ້ໃໝ່ແທນ ຕາມທີ່ໄດ້ກຳນົດໄວ້ໃນວັກທີ ໜຶ່ງ ຂອງມາດຕານີ້.

**ມາດຕາ 13 ການພົ້ນການເປັນຄະນະແກ້ໄຂຂໍ້ຂັດແຍ່ງ**

ບຸກຄົນໃດໜຶ່ງ ຈະຖືກປົດຈາກການເປັນຄະນະແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ ໂດຍເຈົ້າເມືອງ, ຫົວໜ້າເທດສະບານ ຕາມການສະເໜີຂອງນາຍບ້ານ ໂດຍຜ່ານການເຫັນດີຂອງຫ້ອງການຍຸຕິທຳເມືອງ, ເທດສະບານ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ມີການກະທຳຜິດທາງອາຍາ ໂດຍເຈດຕະນາ;
2. ປະລະໜ້າທີ່;
3. ມີການປະພຶດທີ່ບໍ່ເໝາະສົມ;
4. ສຸຂະພາບບໍ່ແຂງແຮງ ແລະ ບໍ່ສາມາດປະຕິບັດໜ້າທີ່ໄດ້.

**ມາດຕາ 14 ໂຄງປະກອບຂອງຄະນະແກ້ໄຂຂໍ້ຂັດແຍ່ງ**

ຄະນະແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ ປະກອບດ້ວຍ: ຫົວໜ້າ, ຮອງຫົວໜ້າ ແລະ ຄະນະ ສາມ ຄົນ.

ໃນການດຳເນີນການໄກ່ເກ່ຍ ໃຫ້ເຊີນຜູ້ຕາງໜ້າຈາກການຈັດຕັ້ງທີ່ກ່ຽວຂ້ອງ ເຂົ້າຮ່ວມເພື່ອປະກອບຄຳເຫັນ ແລະ ສຶກສາອົບຮົມຄູ່ກໍລະນີ ເປັນຕົ້ນ: ແນວໂຮມບ້ານ, ສະຫະພັນແມ່ຍິງບ້ານ, ຊາວໜຸ່ມບ້ານ ແລະ ຜູ້ຕາງໜ້າເຜົ່າຕ່າງໆ.

**ມາດຕາ 15 ມາດຕະຖານ ແລະ ເງື່ອນໄຂຂອງບຸກຄົນທີ່ປະກອບເປັນຄະນະແກ້ໄຂຂໍ້ຂັດແຍ່ງ**

ບຸກຄົນທີ່ປະກອບເປັນຄະນະແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ ຕ້ອງມີມາດຕະຖານ ແລະ ເງື່ອນໄຂ ດັ່ງນີ້:

1. ມີການປະພຶດເປັນແບບຢ່າງທີ່ດີໃນການດຳລົງຊີວິດ, ໄດ້ຮັບຄວາມເຄົາລົບນັບຖື ແລະ ຄວາມໄວ້ວາງໃຈຈາກປະຊາຊົນພາຍໃນບ້ານ;
2. ມີຄວາມຮັບຮູ້ ແລະ ເປັນເອກະພາບກັບແນວທາງນະໂຍບາຍຂອງພັກ;
3. ມີຄວາມສາມາດ, ມີພອນສະຫວັນໃນການປະນີປະນອມຄູ່ກໍລະນີ ແລະ ຮູ້ເຕົ້າໂຮມຄວາມສາມັກຄີພາຍໃນບ້ານ;
4. ບໍ່ເປັນພະນັກງານສັງກັດລັດ;
5. ເປັນພົນລະເມືອງລາວທີ່ມີອາຍຸແຕ່ ຊາວຫ້າ ປີ ຂຶ້ນໄປ, ບໍ່ເປັນບ້າເສຍຈິດ, ມີສຸຂະພາບແຂງແຮງ ແລະ ມີທີ່ຢູ່ຖາວອນພາຍໃນບ້ານ.

**ມາດຕາ 16 ການສິ້ນສຸດການເປັນຄະນະແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ**

ຄະນະແກ້ໄຂຂໍ້ຂັດແຍ່ງ ຫຼື ບຸກຄົນໃດໜຶ່ງ ຈະສິ້ນສຸດການເປັນຄະນະແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ເສຍຊີວິດ;
2. ລາອອກ;
3. ໂຍກຍ້າຍໄປຢູ່ບ້ານອື່ນ;
4. ຖືກປົດຈາກການເປັນຄະນະແກ້ໄຂຂໍ້ຂັດແຍ່ງ.

## ໝວດທີ 4
## ຜູ້ເຂົ້າຮ່ວມໃນການແກ້ໄຂຂໍ້ຂັດແຍ່ງ

**ມາດຕາ 17 ຜູ້ເຂົ້າຮ່ວມໃນການແກ້ໄຂຂໍ້ຂັດແຍ່ງ**

ຜູ້ເຂົ້າຮ່ວມໃນການແກ້ໄຂຂໍ້ຂັດແຍ່ງ ປະກອບມີ:

- ຜູ້ຮ້ອງຂໍ;
- ຜູ້ຖືກຮ້ອງຂໍ;
- ບຸກຄົນທີສາມ;

- ຜູ້ຕາງໜ້າການຈັດຕັ້ງທີ່ກ່ຽວຂ້ອງ ຫຼື ຜູ້ເຂົ້າຮ່ວມອື່ນ.

**ມາດຕາ 18 ຜູ້ຮ້ອງຂໍ**

ຜູ້ຮ້ອງຂໍ ແມ່ນບຸກຄົນ ຫຼື ການຈັດຕັ້ງ ທີ່ສະເໜີທາງປາກເປົ່າ ຫຼື ເປັນລາຍລັກອັກສອນ ຕໍ່ຄະນະແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ ວ່າສິດ ແລະ ຜົນປະໂຫຍດຂອງຕົນ ຖືກຜູ້ອື່ນລະເມີດ.

**ມາດຕາ 19 ສິດ ແລະ ພັນທະຂອງຜູ້ຮ້ອງຂໍ**

**ຜູ້ຮ້ອງຂໍ ມີສິດ ດັ່ງນີ້:**

1. ຍື່ນຄຳຮ້ອງ ຫຼື ສະເໜີ ທາງປາກເປົ່າ ຕໍ່ຄະນະແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ;
2. ສະເໜີຂໍ້ມູນຫຼັກຖານກ່ຽວກັບຂໍ້ຂັດແຍ່ງ;
3. ສະເໜີຄ້ານຕົວບຸກຄົນໃດໜຶ່ງໃນຄະນະແກ້ໄຂຂໍ້ຂັດແຍ່ງ;
4. ສະເໜີຄຳເຫັນ ກ່ຽວກັບການແກ້ໄຂ;
5. ທວງໃຫ້ປະຕິບັດບົດບັນທຶກຂອງການແກ້ໄຂຂໍ້ຂັດແຍ່ງ;
6. ນຳໃຊ້ສິດອື່ນ ຕາມກົດໝາຍ ແລະ ລະບຽບການ.

**ຜູ້ຮ້ອງຂໍ ມີພັນທະ ດັ່ງນີ້:**

1. ເຂົ້າຮ່ວມການແກ້ໄຂຂໍ້ຂັດແຍ່ງຕາມການເຊີນຂອງຄະນະແກ້ໄຂຂໍ້ຂັດແຍ່ງ;
2. ຈ່າຍຄ່າບໍລິການໃນການແກ້ໄຂຂໍ້ຂັດແຍ່ງ;
3. ເຄົາລົບ ແລະ ປະຕິບັດລະບຽບຂອງການແກ້ໄຂຂໍ້ຂັດແຍ່ງ;
4. ປະຕິບັດບົດບັນທຶກການແກ້ໄຂຂໍ້ຂັດແຍ່ງ;
5. ປະຕິບັດພັນທະອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 20 ຜູ້ຖືກຮ້ອງຂໍ**

ຜູ້ຖືກຮ້ອງຂໍ ແມ່ນບຸກຄົນ ຫຼື ການຈັດຕັ້ງ ທີ່ເປັນເປົ້າໝາຍຂອງການຮ້ອງຂໍ ຫຼື ການສະເໜີ ວ່າໄດ້ລະເມີດສິດ ແລະ ຜົນປະໂຫຍດຂອງຜູ້ອື່ນ.

**ມາດຕາ 21 ສິດ ແລະ ພັນທະຂອງຜູ້ຖືກຮ້ອງຂໍ**

**ຜູ້ຖືກຮ້ອງຂໍ ມີສິດ ດັ່ງນີ້:**

1. ຮັບຮູ້ຄຳຮ້ອງຂໍ ຫຼື ຄຳສະເໜີ;
2. ສະເໜີຂໍ້ມູນຫຼັກຖານກ່ຽວກັບຂໍ້ຂັດແຍ່ງ;
3. ສະເໜີຄ້ານຕົວບຸກຄົນໃດໜຶ່ງໃນຄະນະແກ້ໄຂຂໍ້ຂັດແຍ່ງ;
4. ສະເໜີຄຳເຫັນ ກ່ຽວກັບການແກ້ໄຂ;
5. ນຳໃຊ້ສິດອື່ນ ຕາມກົດໝາຍ ແລະ ລະບຽບການ.

**ຜູ້ຖືກຮ້ອງຂໍ ມີພັນທະ ດັ່ງນີ້:**

1. ເຂົ້າຮ່ວມການແກ້ໄຂຂໍ້ຂັດແຍ່ງຕາມການເຊີນຂອງຄະນະແກ້ໄຂຂໍ້ຂັດແຍ່ງ;
2. ຈ່າຍຄ່າບໍລິການໃນການແກ້ໄຂຂໍ້ຂັດແຍ່ງ;
3. ເຄົາລົບ ແລະ ປະຕິບັດລະບຽບຂອງການແກ້ໄຂຂໍ້ຂັດແຍ່ງ;
4. ປະຕິບັດບົດບັນທຶກການແກ້ໄຂຂໍ້ຂັດແຍ່ງ;
5. ປະຕິບັດພັນທະອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 22 ບຸກຄົນທີສາມ**

ບຸກຄົນທີສາມ ແມ່ນບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ບໍ່ແມ່ນຄູ່ກໍລະນີ ແຕ່ມີສ່ວນໄດ້ສ່ວນເສຍກ່ຽວກັບຂໍ້ຂັດແຍ່ງ.

ບຸກຄົນທີສາມ ມີສິດ ແລະ ພັນທະຄ້າຍຄືກັນກັບຜູ້ຮ້ອງຂໍ ຫຼື ຜູ້ຖືກຮ້ອງຂໍ ຍົກເວັ້ນການຈ່າຍຄ່າບໍລິການ.

## ໝວດທີ 5
## ຂໍ້ຂັດແຍ່ງ ແລະ ການກະທຳຜິດທາງອາຍາ ທີ່ນຳມາແກ້ໄຂ

### ມາດຕາ 23 ຂໍ້ຂັດແຍ່ງ

ຂໍ້ຂັດແຍ່ງທີ່ນຳມາແກ້ໄຂ ແມ່ນຂໍ້ຂັດແຍ່ງກ່ຽວກັບສາຍພົວພັນທາງແພ່ງ, ການຄ້າ, ຄອບຄົວ ແລະ ສິ່ງແວດລ້ອມ ລວມທັງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ທາງດ້ານຈິດໃຈ, ຊັບສິນ ແລະ ເສດຖະກິດ.

### ມາດຕາ 24 ການກະທຳຜິດທາງອາຍາ

ການກະທຳຜິດທາງອາຍາທີ່ນຳມາແກ້ໄຂ ມີດັ່ງນີ້:

1. ການກະທຳຜິດທາງອາຍາທີ່ມີລັກສະນະເລັກນ້ອຍ, ເບົາບາງ ເປັນຕົ້ນ: ການທຳຮ້າຍຮ່າງກາຍລະຫວ່າງຍາດໃກ້ຊິດທີ່ບໍ່ມີບາດເຈັບສາຫັດ ຫຼື ບໍ່ເສັຍອົງຄະ, ການນິນທາ, ການໃສ່ຮ້າຍ, ການປ້ອຍດ່າ, ການໝິ່ນປະໝາດຊາກສົບ ຫຼື ຊື່ສຽງຂອງຜູ້ຕາຍ, ການກະທຳຜິດຕໍ່ກຳມະສິດສ່ວນຕົວຂອງຍາດໃກ້ຊິດ, ການລ່ວງລະເມີດເຄຫະສະຖານ ແລະ ການລ່ວງລະເມີດຄວາມລັບສ່ວນຕົວ;
2. ການກະທຳຜິດຂອງເດັກ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີເດັກ.

## ໝວດທີ 6
## ຂັ້ນຕອນການແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ

### ມາດຕາ 25 ການຍື່ນຄຳຮ້ອງ

ເມື່ອມີຂໍ້ຂັດແຍ່ງເກີດຂຶ້ນຄູ່ກໍລະນີ ສາມາດຍື່ນຄຳຮ້ອງຕໍ່ຄະນະແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ ເພື່ອດຳເນີນການແກ້ໄຂ.

ຖ້າຄູ່ກໍລະນີທີ່ຂັດແຍ່ງກັນຢູ່ຄົນລະບ້ານ ໃຫ້ຖືເອົາບ້ານບ່ອນຂໍ້ຂັດແຍ່ງເກີດຂຶ້ນ ຫຼື ບ້ານບ່ອນຜູ້ຖືກຮ້ອງຂໍ ດຳລົງຊີວິດຢູ່ ເປັນບ້ານທີ່ມີສິດໃນການແກ້ໄຂ.

### ມາດຕາ 26 ການຮັບຄຳຮ້ອງ

ຄະນະແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ ຕ້ອງຮັບເອົາຄຳຮ້ອງຂອງຄູ່ກໍລະນີແລ້ວຈົດເຂົ້າໃນປຶ້ມບັນທຶກ, ເຂົ້າເລກທີ, ລົງວັນທີ, ເດືອນ, ປີ ແລະ ເຮັດໃບຮັບເອກະສານໃຫ້ຜູ້ຍື່ນຄຳຮ້ອງ.

ສຳລັບຜູ້ຮ້ອງຂໍ ທີ່ສະເໜີທາງປາກເປົ່າ ຄະນະແກ້ໄຂຂໍ້ຂັດແຍ່ງຕ້ອງບັນທຶກຄຳສະເໜີດັ່ງກ່າວໄວ້ໃນປຶ້ມບັນທຶກ ແລ້ວອ່ານໃຫ້ຜູ້ກ່ຽວຟັງ ເມື່ອເຫັນວ່າຖືກຕ້ອງກໍໃຫ້ຜູ້ກ່ຽວເຊັນ ຫຼື ແປະໂປ້ມືໃສ່ ເພື່ອເປັນຫຼັກຖານ.

### ມາດຕາ 27 ການຄົ້ນຄວ້າ ແລະ ການແກ້ໄຂ ຄຳຮ້ອງ

ເມື່ອໄດ້ຮັບຄໍາຮ້ອງແລ້ວ ຄະນະແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ ຕ້ອງນໍາເອົາຂໍ້ຂັດແຍ່ງມາຄົ້ນຄວ້າ ແລະ ດໍາເນີນການແກ້ໄຂ ພາຍໃນກໍານົດເວລາ ສາມສິບ ວັນ ນັບແຕ່ໄດ້ຮັບຄໍາຮ້ອງ ຫຼື ຄໍາສະເໜີ ເປັນຕົ້ນໄປ.

**ມາດຕາ 28 ການກະກຽມ**

ເພື່ອຮັບປະກັນໃຫ້ແກ່ການແກ້ໄຂຂໍ້ຂັດແຍ່ງ ດໍາເນີນໄປຢ່າງຖືກຕ້ອງ ແລະ ທັນເວລານັ້ນ ຄະນະແກ້ໄຂຂໍ້ຂັດແຍ່ງຕ້ອງກະກຽມໃນດ້ານຕ່າງໆເຊັ່ນ: ເນື້ອໃນ, ວັນເວລາ, ສະຖານທີ່, ການອອກບັດເຊີນໃຫ້ຜູ້ເຂົ້າຮ່ວມ ແລະ ອື່ນໆ.

**ມາດຕາ 29 ການດໍາເນີນການແກ້ໄຂຂໍ້ຂັດແຍ່ງ**

ການດໍາເນີນການແກ້ໄຂຂໍ້ຂັດແຍ່ງ ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. **ການເປີດກອງປະຊຸມ:** ຫົວໜ້າຄະນະແກ້ໄຂຂໍ້ຂັດແຍ່ງກ່າວຈຸດປະສົງ, ແຈ້ງຊື່ ແລະ ນາມສະກຸນ ຂອງຄະນະແກ້ໄຂຂໍ້ຂັດແຍ່ງ ແລະ ຂອງຄູ່ກໍລະນີ, ແຈ້ງລະບຽບການຂອງການແກ້ໄຂ ແລະ ເນື້ອໃນຂອງຂໍ້ຂັດແຍ່ງ;
2. **ການສະເໜີຄໍາເຫັນຂອງຄູ່ກໍລະນີ ແລະ ຜູ້ເຂົ້າຮ່ວມ:** ຄະນະແກ້ໄຂຂໍ້ຂັດແຍ່ງ ສະເໜີໃຫ້ຜູ້ຮ້ອງຂໍມີຄໍາເຫັນກ່ອນ, ຈາກນັ້ນ ຈຶ່ງໃຫ້ຜູ້ຖືກຮ້ອງຂໍມີຄໍາເຫັນ. ຖ້າມີ ບຸກຄົນທີສາມ ຫຼື ຜູ້ເຂົ້າຮ່ວມອື່ນ ກໍໃຫ້ພວກກ່ຽວປະກອບຄໍາເຫັນ;
3. **ການສະເໜີວິທີແກ້ໄຂຂອງຄູ່ກໍລະນີ:** ຄະນະແກ້ໄຂຂໍ້ຂັດແຍ່ງ ສະເໜີໃຫ້ຄູ່ກໍລະນີ ມີຄໍາເຫັນ ແລະ ຕົກລົງແກ້ໄຂບັນຫາຮ່ວມກັນ;
4. **ການສະເໜີວິທີແກ້ໄຂຂອງຄະນະແກ້ໄຂຂໍ້ຂັດແຍ່ງ:** ຖ້າຄູ່ກໍລະນີ ຫາກບໍ່ສາມາດຕົກລົງກັນໄດ້ ຄະນະແກ້ໄຂຂໍ້ຂັດແຍ່ງ ຕ້ອງສະເໜີວິທີທາງອອກ ແລະ ຊີ້ຊ່ອງທາງທີ່ເໝາະສົມໃຫ້ແກ່ຄູ່ກໍລະນີພິຈາລະນາ ແລະ ຕົກລົງແກ້ໄຂຂໍ້ຂັດແຍ່ງທີ່ເກີດຂຶ້ນຮ່ວມກັນ;
5. **ການສຶກສາອົບຮົມ:** ພາຍຫຼັງຄູ່ກໍລະນີ ແລະ ຜູ້ເຂົ້າຮ່ວມໄດ້ມີຄໍາເຫັນແລ້ວ ຄະນະແກ້ໄຂຂໍ້ຂັດແຍ່ງກໍດໍາເນີນການສຶກສາອົບຮົມ ເພື່ອໃຫ້ເຂົາເຈົ້າເຂົ້າໃຈ, ມີຄວາມຖືກຕ້ອງປອງດອງ, ຮັກແພງສາມັກຄີ ຊຶ່ງກັນ ແລະ ກັນ;
6. **ການສະຫຼຸບ:** ພາຍຫຼັງທີ່ໄດ້ສຶກສາອົບຮົມແລ້ວ ຄະນະແກ້ໄຂຂໍ້ຂັດແຍ່ງຕ້ອງເຮັດບົດບັນທຶກການໄກ່ເກ່ຍ ແລະ ອ່ານໃຫ້ຜູ້ເຂົ້າຮ່ວມຟັງ ແລ້ວພ້ອມກັນລົງລາຍເຊັນ ຈາກນັ້ນ ຫົວໜ້າຄະນະແກ້ໄຂຂໍ້ຂັດແຍ່ງກ່າວປິດການໄກ່ເກ່ຍ.

**ມາດຕາ 30 ການໂຈະ ຫຼື ເລື່ອນການແກ້ໄຂຂໍ້ຂັດແຍ່ງ**

ການແກ້ໄຂຂໍ້ຂັດແຍ່ງສາມາດໂຈະ ຫຼື ເລື່ອນໄດ້ ຕາມການສະເໜີຂອງຄູ່ກໍລະນີ ຫຼື ຖ້າເຫັນວ່າມີຄວາມຈໍາເປັນ. ໃນກໍລະນີທີ່ຄູ່ກໍລະນີບໍ່ສາມາດຕົກລົງກໍານົດເວລາໃນການໂຈະ ຫຼື ການເລື່ອນໄດ້ ແມ່ນຄະນະແກ້ໄຂຂໍ້ຂັດແຍ່ງເປັນຜູ້ຕົກລົງ.

**ມາດຕາ 31 ບົດບັນທຶກຜົນຂອງການແກ້ໄຂຂໍ້ຂັດແຍ່ງ**

ພາຍຫຼັງສິ້ນສຸດການແກ້ໄຂຂໍ້ຂັດແຍ່ງ ຕ້ອງເຮັດບົດບັນທຶກກ່ຽວກັບບັນຫາທີ່ໄດ້ເວົ້າກັນໃນເວລາແກ້ໄຂ ຢ່າງລະອຽດຈະແຈ້ງ, ຊັດເຈນ ເຊັ່ນ: ບັນຫາທີ່ຕົກລົງກັນ, ບັນຫາທີ່ຍັງບໍ່ທັນຕົກລົງກັນໄດ້ ຫຼື ໄດ້ບາງສ່ວນ, ຂໍ້ສະເໜີຕ່າງໆຂອງຄູ່ກໍລະນີ, ກໍານົດເວລາ, ສະຖານທີ່, ວິທີການທົດແທນຄ່າເສຍຫາຍ ແລະ ອື່ນໆ. ບົດບັນທຶກ ຕ້ອງອ່ານຊ່ອງໜ້າຄູ່ກໍລະນີ ແລະ ຜູ້ເຂົ້າຮ່ວມຟັງ ຈາກນັ້ນ ໃຫ້ຄູ່ກໍລະນີ, ຄະນະແກ້ໄຂຂໍ້ຂັດແຍ່ງລົງລາຍເຊັນ ຫຼື ແປະໂປ້ມືໃສ່ ເພື່ອເປັນຫຼັກຖານ.

ໃນກໍລະນີບົດບັນທຶກມີຮອຍລົບ ຫຼື ຂີດຂ້າ, ເພີ່ມເຕີມຂໍ້ຄວາມໃດໜຶ່ງນັ້ນ ໃຫ້ຄູ່ກໍລະນີເຊັນ ຫຼື ແປະໂປ້ມືຮັບຮູ້ໃສ່ໜ້າແຖວນັ້ນໄວ້.

ບົດບັນທຶກການແກ້ໄຂຂໍ້ຂັດແຍ່ງ ຕ້ອງເຮັດເປັນ ສາມ ສະບັບ ທີ່ມີເນື້ອໃນຄືກັນເພື່ອມອບໃຫ້ຄູ່ກໍລະນີຝ່າຍລະ ໜຶ່ງ ສະບັບ ແລະ ເກັບມ້ຽນໄວ້ໃນສໍານວນ ໜຶ່ງ ສະບັບ.

ໃນກໍລະນີ ຄູ່ກໍລະນີ ບໍ່ສາມາດຕົກລົງກັນໄດ້ ຄະນະແກ້ໄຂຂໍ້ຂັດແຍ່ງໃຫ້ຄູ່ກໍລະນີສະເໜີໄປຫາພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 32 ການຈັດຕັ້ງປະຕິບັດບົດບັນທຶກຜົນຂອງການແກ້ໄຂຂໍ້ຂັດແຍ່ງ**

ຄະນະແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານເປັນເຈົ້າການຕິດຕາມ ແລະ ຊຸກຍູ້ໃຫ້ຄູ່ກໍລະນີ ປະຕິບັດບົດບັນທຶກຜົນຂອງການແກ້ໄຂຂໍ້ຂັດແຍ່ງທີ່ຕົກລົງກັນໄດ້ນັ້ນ ຈົນສໍາເລັດ.

ຖ້າຫາກບໍ່ສາມາດ ປະຕິບັດໄດ້ ຫຼື ປະຕິບັດບໍ່ສໍາເລັດ ຄະນະແກ້ໄຂຂໍ້ຂັດແຍ່ງແນະນໍາໃຫ້ຄູ່ກໍລະນີຮ້ອງຟ້ອງຕໍ່ສານປະຊາຊົນ ຫຼື ພາກສ່ວນທີ່ກ່ຽວຂ້ອງ ຕາມຂະບວນການຍຸຕິທໍາ.

## ໝວດທີ 7
## ຂໍ້ຫ້າມ

**ມາດຕາ 33 ຂໍ້ຫ້າມສໍາລັບຄະນະແກ້ໄຂຂໍ້ຂັດແຍ່ງ**

ຫ້າມຄະນະແກ້ໄຂຂໍ້ຂັດແຍ່ງ ມີພຶດຕິກໍາ ດັ່ງນີ້:

1. ສວຍໃຊ້ໜ້າທີ່ ເພື່ອຫາຜົນປະໂຫຍດໃຫ້ແກ່ຕົນເອງ, ຄອບຄົວ, ຍາດພີ່ນ້ອງ ແລະ ໝູ່ຄູ່;
2. ໃຊ້ອໍານາດເກີນຂອບເຂດ, ບັງຄັບ, ນາບຂູ່, ຂັດຂວາງ ຫຼື ຕັດສິນບັນຫາໂດຍບໍ່ໄດ້ຮັບຄໍາເຫັນດີຂອງຄູ່ກໍລະນີ;
3. ກົດໜ່ວງຖ່ວງດຶງ ຫຼື ທໍາລາຍເອກະສານກ່ຽວກັບການແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ;
4. ຈໍາກັດ ຫຼື ຕັດສິດຂອງຄູ່ກໍລະນີ;
5. ແກ້ໄຂກ່ຽວກັບຊັບສິນຂອງລັດ;
6. ແກ້ໄຂຄະດີ ແລະ ຂໍ້ຂັດແຍ່ງທີ່ແກ້ໄຂສໍາເລັດ ຢູ່ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
7. ປັບໃໝ ຫຼື ລົງໂທດ ຄູ່ກໍລະນີ;
8. ເປີດເຜີຍຄວາມລັບສ່ວນຕົວຂອງຄູ່ກໍລະນີ;
9. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 34 ຂໍ້ຫ້າມສໍາລັບຄູ່ກໍລະນີ**

ຫ້າມຄູ່ກໍລະນີ ມີພຶດຕິກໍາ ດັ່ງນີ້:

1. ສະໜອງຂໍ້ມູນ ຫຼື ເອກະສານທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ;
2. ສະແດງກິລິຍາມາລະຍາດບໍ່ສຸພາບ, ບໍ່ເໝາະສົມ, ບັງຄັບ, ນາບຂູ່, ຂັດຂວາງ, ໃຊ້ຄວາມຮຸນແຮງຕໍ່ຄະນະແກ້ໄຂຂໍ້ຂັດແຍ່ງ ແລະ ກັບຄູ່ກໍລະນີ;
3. ສະໜອງຜົນປະໂຫຍດໃດໜຶ່ງແກ່ຄະນະແກ້ໄຂຂໍ້ຂັດແຍ່ງ;
4. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 35 ຂໍ້ຫ້າມສໍາລັບບຸກຄົນ ແລະ ການຈັດຕັ້ງອື່ນ**

ຫ້າມບຸກຄົນ ແລະ ການຈັດຕັ້ງອື່ນ ມີພຶດຕິກໍາ ດັ່ງນີ້:

1. ບໍ່ໃຫ້ການຮ່ວມມື ຫຼື ຂັດຂວາງການເຄື່ອນໄຫວປະຕິບັດໜ້າທີ່ວຽກງານຂອງຄະນະແກ້ໄຂຂໍ້ຂັດແຍ່ງ;
2. ຍຸຍົງ, ບໍ່ໃຫ້ຄູ່ກໍລະນີໄປນຳໃຊ້ການບໍລິການຂອງການແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ;
3. ເປັນສື່ກາງໃນການທວງເອົາ ຫຼື ຮັບເອົາຜົນປະໂຫຍດໃດໜຶ່ງຈາກການແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ;
4. ໃຫ້ຂໍ້ມູນທີ່ບໍ່ຖືກຕ້ອງ, ສົມຮູ້ຮ່ວມຄິດ, ປອມແປງ, ທຳລາຍເອກະສານ ຫຼື ຫຼັກຖານ ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ;
5. ບັງຄັບ, ນາບຂູ່, ຂັດຂວາງ, ໃຊ້ຄວາມຮຸນແຮງ ຫຼື ແຊກແຊງການແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 8
## ຄ່າບໍລິການ

### ມາດຕາ 36 ຄ່າບໍລິການ

ຄ່າບໍລິການ ແມ່ນຄ່າໃຊ້ຈ່າຍເຂົ້າໃນການແກ້ໄຂຂໍ້ຂັດແຍ່ງ ແຕ່ລະຂໍ້ຂັດແຍ່ງ ທີ່ເກັບຈາກຄູ່ກໍລະນີຝ່າຍລະເຄິ່ງ.

ສຳລັບອັດຕາຄ່າບໍລິການ ໃຫ້ປະຕິບັດຕາມລັດຖະບັນຍັດຂອງປະທານປະເທດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ທີ່ປະກາດໃຊ້ແຕ່ລະໄລຍະ.

### ມາດຕາ 37 ການຍົກເວັ້ນຄ່າບໍລິການ

ຖ້າຄູ່ກໍລະນີ ຫາກບໍ່ມີຄວາມສາມາດທາງດ້ານເສດຖະກິດ ແລະ ບໍ່ສາມາດຈ່າຍຄ່າບໍລິການໄດ້ຍ້ອນຄວາມທຸກຍາກຂາດເຂີນ ໂດຍມີການຢັ້ງຢືນຈາກນາຍບ້ານ ກໍໃຫ້ຍົກເວັ້ນຄ່າບໍລິການ ແຕ່ຕ້ອງໄດ້ດຳເນີນການແກ້ໄຂ.

## ໝວດທີ 9
## ການຄຸ້ມຄອງ ແລະ ກວດກາ

### ມາດຕາ 38 ອົງການຄຸ້ມຄອງ ແລະ ກວດກາ

ອົງການຄຸ້ມຄອງ ແລະ ກວດກາວຽກງານແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ ປະກອບດ້ວຍ:

1. ກະຊວງຍຸຕິທຳ;
2. ພະແນກຍຸຕິທຳແຂວງ, ນະຄອນ;
3. ຫ້ອງການຍຸຕິທຳເມືອງ, ເທດສະບານ;
4. ອົງການປົກຄອງບ້ານ.

### ມາດຕາ 39 ສິດ ແລະ ໜ້າທີ່ ຂອງກະຊວງຍຸຕິທຳ

ໃນການຄຸ້ມຄອງ ແລະ ກວດກາວຽກງານການແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ ກະຊວງຍຸຕິທຳ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນເສນາທິການໃຫ້ລັດຖະບານ ໃນການຄຸ້ມຄອງມະຫາພາກ ກ່ຽວກັບວຽກງານການແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ;
2. ຊີ້ນຳ, ຕິດຕາມ, ກວດກາ ແລະ ຊຸກຍູ້ຂະແໜງການຍຸຕິທຳທ້ອງຖິ່ນ ກ່ຽວກັບວຽກງານການແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ;
3. ຄົ້ນຄວ້າ ແລະ ວາງແຜນກ່ຽວກັບວຽກງານການແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ;

4. ອອກນິຕິກຳກ່ຽວກັບການຄຸ້ມຄອງການແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ;
5. ຕອບສະໜອງເອກະສານ ແລະ ຄູ່ມືທີ່ຈຳເປັນສຳລັບການແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ;
6. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ໃນການຄຸ້ມຄອງວຽກງານການແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ;
7. ຮ່ວມມືກັບຕ່າງປະເທດ ແລະ ສາກົນ ກ່ຽວກັບວຽກງານການແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ;
8. ເກັບກຳສະຖິຕິ, ສະຫຼຸບ ແລະ ລາຍງານວຽກງານແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານໃນຂອບເຂດທົ່ວປະເທດໃຫ້ລັດຖະບານ ຢ່າງເປັນປົກກະຕິ;
9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມການມອບໝາຍ.

**ມາດຕາ 40 ສິດ ແລະ ໜ້າທີ່ ຂອງພະແນກຍຸຕິທຳແຂວງ, ນະຄອນ**

ໃນການຄຸ້ມຄອງ ແລະ ກວດກາວຽກງານແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ ພະແນກຍຸຕິທຳແຂວງ, ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນເສນາທິການໃຫ້ແກ່ເຈົ້າແຂວງ, ເຈົ້າຄອງນະຄອນ ໃນການຈັດຕັ້ງຜັນຂະຫຍາຍວຽກງານແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ;
2. ຊີ້ນຳ, ຕິດຕາມ, ກວດກາ ແລະ ຊຸກຍູ້ຫ້ອງການຍຸຕິທຳເມືອງ, ເທດສະບານ ກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ;
3. ຕອບສະໜອງເອກະສານ ແລະ ຄູ່ມືທີ່ຈຳເປັນສຳລັບການແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ ໃຫ້ແກ່ຫ້ອງການຍຸຕິທຳເມືອງ, ເທດສະບານ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ;
4. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ໃນການຄຸ້ມຄອງວຽກງານແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ;
5. ເກັບກຳສະຖິຕິ, ສະຫຼຸບ ແລະ ລາຍງານວຽກງານແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ ໃຫ້ເຈົ້າແຂວງ, ເຈົ້າຄອງນະຄອນ ແລະ ກະຊວງຍຸຕິທຳ ຢ່າງເປັນປົກກະຕິ;
6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມການມອບໝາຍ.

**ມາດຕາ 41 ສິດ ແລະ ໜ້າທີ່ ຂອງຫ້ອງການຍຸຕິທຳເມືອງ, ເທດສະບານ**

ໃນການຄຸ້ມຄອງ ແລະ ກວດກາວຽກງານແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ ຫ້ອງການຍຸຕິທຳເມືອງ, ເທດສະບານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນເສນາທິການໃຫ້ແກ່ເຈົ້າເມືອງ, ຫົວໜ້າເທດສະບານ ໃນການຈັດຕັ້ງຜັນຂະຫຍາຍວຽກງານແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ;
2. ຄົ້ນຄວ້າ ແລະ ມີຄຳເຫັນກ່ຽວກັບການແຕ່ງຕັ້ງ ຫຼື ປົດການເປັນຄະນະແກ້ໄຂຂໍ້ຂັດແຍ່ງ;
3. ຊີ້ນຳ, ຕິດຕາມ, ກວດກາ ແລະ ຊຸກຍູ້ ຄະນະແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ ກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງ;
4. ຕອບສະໜອງເອກະສານ ແລະ ຄູ່ມືທີ່ຈຳເປັນສຳລັບການແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ ໃຫ້ແກ່ຄະນະແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ;
5. ຈັດຕັ້ງການຝຶກອົບຮົມ ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ ໃຫ້ແກ່ຄະນະແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ;
6. ປະສານສົມທົບກັບອົງການປົກຄອງບ້ານ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງໃນການຄຸ້ມຄອງວຽກງານແກ້ໄຂຂໍ້ຂັດແຍ່ງຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ;

7. ເກັບກຳສະຖິຕິ, ສະຫຼຸບ ແລະ ລາຍງານວຽກງານແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ ໃຫ້ເຈົ້າເມືອງ, ຫົວໜ້າເທດສະບານ ແລະ ພະແນກຍຸຕິທຳແຂວງ, ນະຄອນ ຢ່າງເປັນປົກກະຕິ;
8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມການມອບໝາຍ.

**ມາດຕາ 42 ສິດ ແລະ ໜ້າທີ່ ຂອງອົງການປົກຄອງບ້ານ**

ໃນການຄຸ້ມຄອງ ແລະ ກວດກາວຽກງານແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ ອົງການປົກຄອງບ້ານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄຸ້ມຄອງ, ຕິດຕາມ, ກວດກາ, ຊຸກຍູ້ການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ;
2. ສະເໜີແຕ່ງຕັ້ງ ຫຼື ປົດ ການເປັນຄະນະແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ ຕໍ່ເຈົ້າເມືອງ, ຫົວໜ້າເທດສະບານ ໂດຍຜ່ານຫ້ອງການຍຸຕິທຳເມືອງ, ເທດສະບານ;
3. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມການມອບໝາຍ.

## ໝວດທີ 10
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 43 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ການຈັດຕັ້ງ ແລະ ຄະນະແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ ທີ່ມີຜົນງານດີເດັ່ນໃນການປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມຄວາມເໝາະສົມ.

**ມາດຕາ 44 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ການຈັດຕັ້ງ ແລະ ຄະນະແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກຕັກເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍ ຫຼື ຖືກດຳເນີນຄະດີອາຍາ ຕາມກົດໝາຍ.

## ໝວດທີ 11
## ບົດບັນຍັດສຸດທ້າຍ

**ມາດຕາ 45 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມຄຸ້ມຄອງລະບົບຍຸຕິທຳ, ຫ້ອງການ, ບັນດາກົມ, ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ສະຖາບັນຍຸຕິທຳແຫ່ງຊາດ, ພະແນກຍຸຕິທຳແຂວງ, ນະຄອນຫຼວງ, ຫ້ອງການຍຸຕິທຳເມືອງ, ເທດສະບານ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 46 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຂໍ້ຕົກລົງສະບັບເລກທີ 210/ກຍ, ລົງວັນທີ 19 ຕຸລາ 2009 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງໜ່ວຍໄກ່ເກັ່ຍຂໍ້ຂັດແຍ່ງຂັ້ນບ້ານ.

**ລັດຖະມົນຕີ**

ບຸນເກີດ ສັງສົມສັກ